ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ | ເລກທີ 16 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 11 DEC 2024

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນເພື່ອລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 419/ສຄຄຊ, ລົງວັນທີ 26 ພະຈິກ 2024.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານກອງທຶນເພື່ອລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນ ເພື່ອເປັນບ່ອນອີງໃຫ້ແກ່ການ ຂຶ້ນທະບຽນ ແລະ ການເຄື່ອນໄຫວ ກ່ຽວກັບວຽກງານກອງທຶນເພື່ອລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນ ແນໃສ່ຊຸກຍູ້ເຮັດ ໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີຄວາມ ໂປ່ງໃສ ແລະ ກວດສອບໄດ້ ພ້ອມທັງເພີ່ມຊ່ອງທາງໃນການເຂົ້າເຖິງແຫຼ່ງທຶນໃຫ້ແກ່ວິສາຫະກິດ ຫຼື ທຸລະກິດແບບສະຕາດອັບ.

**ມາດຕາ 2 ກອງທຶນ ເພື່ອລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນ**

ກອງທຶນເພື່ອລົງທຶນໃນບໍລິສັດ (Private Equity "PE") ແມ່ນກອງທຶນສ່ວນບຸກຄົນປະເພດໜຶ່ງ ທີ່ມີເປົ້າໝາຍການລົງທຶນຕາມການກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ກອງທຶນຮ່ວມລົງທຶນ (Venture Capital "VC") ແມ່ນກອງທຶນສ່ວນບຸກຄົນປະເພດໜຶ່ງ ທີ່ໄດ້ຮັບການສ້າງຕັ້ງ ແລະ ລະດົມທຶນຈາກ ບຸກຄົນ ຫຼື ນິຕິບຸກຄົນ ເພື່ອລົງທຶນໃສ່ທຸລະກິດແບບສະຕາດອັບ ຫຼື ທຸລະກິດຂະໜາດນ້ອຍ ທີ່ມີທ່າແຮງການພັດທະນາໄລຍະຍາວ ທີ່ມີເປົ້າໝາຍການລົງທຶນຕາມການກຳນົດໄວ້ໃນ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກອງທຶນ** ໝາຍເຖິງ ກອງທຶນເພື່ອລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນ;

2. **ຜູ້ລົງທຶນໃນກອງທຶນ** ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ບໍລິສັດປະກັນໄພ, ກອງທຶນປະກັນສັງຄົມ ແລະ ສະຖາບັນ, ບຸກຄົນ ຫຼື ນິຕິບຸກຄົນອື່ນ ພາຍໃນ ຫຼື ຕ່າງປະເທດ ທີ່ປະກອບທຶນ ດ້ວຍການເຮັດສັນຍາກັບ ຜູ້ສະເໜີຂໍຂຶ້ນທະບຽນ.

3. **ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍກຳນົດຂະໜາດຕາມຈຳນວນແຮງງານສະເລ່ຍໃນແຕ່ລະປີ, ມູນຄ່າຊັບສິນທັງໝົດ ແລະ ລວມຍອດລາຍຮັບທຸລະກິດ ປະຈຳປີຂອງແຕ່ລະຂະແໜງວິສາຫະກິດ ຊຶ່ງລັດຖະບານເປັນຜູ້ກຳນົດໃນແຕ່ລະໄລຍະ.

4. **ທຸລະກິດແບບສະຕາດອັບ (Startup)** ໝາຍເຖິງ ທຸລະກິດ ຫຼື ໂຄງການທຸລະກິດຮູບແບບໃໝ່ ດ້ວຍການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດ້ານຕ່າງໆ ຊຶ່ງມີຮູບແບບທຸລະກິດ ທີ່ຮອງຮັບການຂະຫຍາຍຕົວໃນຈັງຫວະທີ່ໄວໄດ້, ໂດຍທຸລະກິດແບບສະຕາດອັບ ຕ້ອງໄດ້ຮັບໃບຢັ້ງຢືນທຸລະກິດແບບສະຕາດອັບຈາກພາກສ່ວນກ່ຽວຂ້ອງ.

5. **ບໍລິສັດຫຼັກຊັບ** ໝາຍເຖິງ ບໍລິສັດຫຼັກຊັບທີ່ໄດ້ຮັບໃບອະນຸຍາດເຄື່ອນໄຫວທຸລະກິດ ປະເພດ ບໍລິຫານກອງທຶນສ່ວນບຸກຄົນ.

6. **ຜູ້ບໍລິຫານກອງທຶນ** ໝາຍເຖິງ ຜູ້ບໍລິຫານກອງທຶນເພື່ອລົງທຶນໃນບໍລິສັດ ແລະ/ຫຼື ກອງທຶນຮ່ວມລົງທຶນ ທີ່ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ປະເພດ ຜູ້ບໍລິຫານກອງທຶນເພື່ອການລົງທຶນ ໃນກອງທຶນສ່ວນບຸກຄົນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

7. **ຜູ້ມີອຳນາດຄວບຄຸມ** ໝາຍເຖິງ ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າ ຊາວຫ້າສ່ວນຮ້ອຍ (25%) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ຫຼື ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຂອງບໍລິສັດ ທີ່ມີສ່ວນກ່ຽວຂ້ອງກັບການກຳນົດ ນະໂຍບາຍ, ການບໍລິຫານ ຫຼື ການເຄື່ອນໄຫວທຸລະກິດທີ່ສຳຄັນຂອງບໍລິສັດ.

**ມາດຕາ 4 ຫຼັກການເຄື່ອນໄຫວຂອງກອງທຶນ**

ກອງທຶນ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ສອດຄ່ອງຕາມການກຳນົດຂອງ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໂປ່ງໃສ ແລະ ສາມາດກວດສອບໄດ້;
3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ, ຜູ້ລົງທຶນໃນກອງທຶນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ຜູ້ບໍລິຫານກອງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານກອງທຶນເພື່ອລົງທຶນໃນບໍລິສັດ ແລະ ທຸລະກິດຮ່ວມລົງທຶນ ຢູ່ ສປປ ລາວ.

# ໝວດທີ 2
# ກອງທຶນເພື່ອລົງທຶນໃນບໍລິສັດ

**ມາດຕາ 6 ຮູບແບບການສ້າງຕັ້ງກອງທຶນເພື່ອລົງທຶນໃນບໍລິສັດ**

ກອງທຶນເພື່ອລົງທຶນໃນບໍລິສັດ ສ້າງຕັ້ງຂຶ້ນໃນຮູບແບບສັນຍາ ແຕ່ຕ້ອງຂຶ້ນທະບຽນກອງທຶນນໍາ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 ຜູ້ສະເໜີຂໍອະນຸຍາດຂຶ້ນທະບຽນກອງທຶນເພື່ອລົງທຶນໃນບໍລິສັດ**

ຜູ້ສະເໜີຂໍອະນຸຍາດຂຶ້ນທະບຽນກອງທຶນເພື່ອການລົງທຶນໃນບໍລິສັດ ຕ້ອງແມ່ນ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ບໍລິສັດຫຼັກຊັບ.

**ມາດຕາ 8 ເງື່ອນໄຂການຂຶ້ນທະບຽນກອງທຶນເພື່ອລົງທຶນໃນບໍລິສັດ**

ກອງທຶນເພື່ອລົງທຶນໃນບໍລິສັດ ທີ່ຂໍອະນຸຍາດຂຶ້ນທະບຽນ ຕ້ອງມີເງື່ອນ ດັ່ງນີ້:

1. ມີທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ ຢ່າງໜ້ອຍ 1 ຕື້ກີບ;
2. ມີແຜນການລົງທຶນ ຕາມເປົ້າໝາຍການລົງທຶນ;
3. ມີສັນຍາ ກັບ ທະນາຄານດູແລຊັບສິນ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອເກັບຮັກສາ ແລະ ຄຸ້ມຄອງຊັບສິນ ແລະ ເປັນຕົວແທນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;
4. ມີສັນຍາ ກັບ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອກວດສອບຖານະການເງິນຂອງ ກອງທຶນເພື່ອລົງທຶນໃນບໍລິສັດ;
5. ມີສັນຍາ ກັບ ຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ;
6. ມີຜູ້ບໍລິຫານກອງທຶນ ຢ່າງໜ້ອຍ 1 ຄົນ ແລະ ພະນັກງານດໍາເນີນງານຂອງກອງທຶນເພື່ອລົງທຶນໃນບໍລິສັດ ຈໍານວນໜຶ່ງຕາມຄວາມເໝາະສົມ;
7. ມີການປະເມີນດ້ານຄວາມສ່ຽງໃນການລົງທຶນ ແລະ ແຫຼ່ງທີ່ມາຂອງລາຍໄດ້ຂອງກອງທຶນເພື່ອລົງທຶນໃນບໍລິສັດ;
8. ມີການສອບເສັງຄວາມເຂົ້າໃຈກ່ຽວກັບການລົງທຶນໃນຫຼັກຊັບ ແລະ ຄວາມສາມາດຮັບຄວາມສ່ຽງໃນການລົງທຶນຂອງ ຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ;
9. ມີການຊອກຮູ້ຂໍ້ມູນຂອງ ຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ ເປັນຕົ້ນແມ່ນ ຊື່, ທີ່ຢູ່, ອາຊີບ, ບ່ອນປະຈໍາການ, ແຫຼ່ງທີ່ມາຂອງເງິນ ແລະ ຖານະການເງິນ ພ້ອມທັງຮັບປະກັນວ່າ ຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ ແມ່ນເຈົ້າຂອງທຶນທີ່ແທ້ຈິງ ແລະ ບໍ່ນອນໃນບັນຊີລາຍຊື່ທີ່ກໍານົດໄວ້ໃນຍັດຕິຂອງ ສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ;
10. ເງື່ອນໄຂອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 9 ເອກະສານປະກອບການຂໍຂຶ້ນທະບຽນກອງທຶນເພື່ອລົງທຶນໃນບໍລິສັດ**

ເອກະສານປະກອບການຂໍຂຶ້ນທະບຽນກອງທຶນເພື່ອລົງໃນບໍລິສັດ ມີດັ່ງນີ້:

1. ໃບສະເໜີຂໍຂຶ້ນທະບຽນ ກອງທຶນເພື່ອລົງໃນບໍລິສັດ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ແຜນການລົງທຶນຂອງກອງທຶນເພື່ອລົງທຶນໃນບໍລິສັດ;

3. ສັນຍາລະຫວ່າງ ບໍລິສັດ ກັບ ທະນາຄານດູແລຊັບສິນ;

4. ສັນຍາລະຫວ່າງ ບໍລິສັດ ກັບ ບໍລິສັດກວດສອບ;

5. ສັນຍາລະຫວ່າງ ບໍລິສັດ ກັບ ຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ;

6. ໜັງສືແຕ່ງຕັ້ງຜູ້ບໍລິຫານກອງທຶນ ແລະ ພະນັກງານດຳເນີນງານຂອງກອງທຶນເພື່ອລົງທຶນໃນບໍລິສັດ;

7. ເອກະສານໃນການປະເມີນຄວາມສ່ຽງໃນການລົງທຶນຂອງຜູ້ລົງທຶນ ແລະ ແຫຼ່ງທີ່ມາຂອງລາຍໄດ້ຂອງກອງທຶນເພື່ອລົງທຶນໃນບໍລິສັດ;

8. ໃບຢັ້ງຢືນການສອບເສັງຄວາມເຂົ້າໃຈກ່ຽວກັບການລົງທຶນໃນຫຼັກຊັບ ແລະ ຄວາມສາມາດຮັບຄວາມສ່ຽງໃນການລົງທຶນ ຂອງຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ;

9. ໃບຢັ້ງຢືນຜົນສຳເລັດການປະກອບທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ ຈາກຜູ້ສະເໜີຂໍອະນຸຍາດຂຶ້ນທະບຽນ ກອງທຶນເພື່ອລົງທຶນໃນບໍລິສັດ;

10. ໃບຢັ້ງຢືນຈຳນວນເງິນໃນບັນຊີຂອງ ກອງທຶນເພື່ອລົງທຶນໃນບໍລິສັດ ທີ່ເປີດໄວ້ກັບ ທະນາຄານດູແລຊັບສິນ;

11. ລາຍຊື່, ຈຳນວນ ແລະ ອັດຕາສ່ວນ ຂອງຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ;

12. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 ການພິຈາລະນາ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ການສະເໜີຂໍຂຶ້ນທະບຽນກອງທຶນເພື່ອ ລົງທຶນໃນບໍລິສັດ ພາຍໃນເວລາ 15 ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.ກໍລະນີປະຕິເສດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ ໃຫ້ຜູ້ຮ້ອງຂໍຊາບ.

ໃນເວລາພິຈາລະນາການຂໍຂຶ້ນທະບຽນກອງທຶນເພື່ອລົງທຶນໃນບໍລິສັດ ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

**ມາດຕາ 11 ເປົ້າໝາຍການລົງທຶນຂອງກອງທຶນເພື່ອລົງທຶນໃນບໍລິສັດ**

ເປົ້າໝາຍການລົງທຶນຂອງກອງທຶນເພື່ອລົງທຶນໃນບໍລິສັດ ແມ່ນລົງທຶນໃນວິສາຫະກິດ ຂະໜາດກາງ ແລະຂະໜາດໃຫຍ່.

ສຳລັບ ອັດຕາສ່ວນການລົງທຶນຂອງ ກອງທຶນເພື່ອລົງທຶນໃນບໍລິສັດ ແມ່ນໃຫ້ປະຕິບັດຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນແຕ່ລະໄລຍະ.

**ມາດຕາ 12 ອາຍຸການລົງທຶນຂອງກອງທຶນເພື່ອລົງທຶນໃນບໍລິສັດ**

ກອງທຶນເພື່ອລົງທຶນໃນບໍລິສັດ ມີອາຍຸການລົງທຶນໃນ ເປົ້າໝາຍການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ຕາມການຕົກລົງໄວ້ໃນສັນຍາຂອງຜູ້ລົງທຶນໃນກອງທຶນເພື່ອລົງທຶນໃນບໍລິສັດ.

**ມາດຕາ 13 ການໄຖ່ຖອນການລົງທຶນຂອງກອງທຶນເພື່ອລົງທຶນໃນບໍລິສັດ**

ກອງທຶນເພື່ອລົງທຶນໃນບໍລິສັດ ສາມາດຖອນການລົງທຶນໃນບໍລິສັດ ຫຼື ວິສາຫະກິດເປົ້າໝາຍ ກ່ອນ ຫຼື ຄົບອາຍຸການລົງທຶນ ຊຶ່ງສາມາດດຳເນີນການຖອນໄດ້ ດັ່ງນີ້:

1. ນຳເອົາບໍລິສັດ ຫຼື ວິສາຫະກິດເປົ້າໝາຍ (Investee company) ອອກຈຳໜ່າຍຮຸ້ນ ແລະ/ຫຼື ຂາຍຮຸ້ນຂອງຕົນໃນຕະຫຼາດຫຼັກຊັບລາວ ກໍລະນີ ທີ່ກອງທຶນດັ່ງກ່າວ ໄດ້ມີການຈົດທະບຽນໃນຕະຫຼາດຫຼັກຊັບລາວ;
2. ຂາຍ ຫຼື ໂອນຮຸ້ນໃຫ້ແກ່ ເຈົ້າຂອງເດີມ ແລະ/ຫຼື ພາກສ່ວນອື່ນ.

## ໝວດທີ 3
## ກອງທຶນຮ່ວມລົງທຶນ

**ມາດຕາ 14 ຜູ້ສະເໜີຂໍອະນຸຍາດຂຶ້ນທະບຽນກອງທຶນຮ່ວມລົງທຶນ**

ຜູ້ສະເໜີຂໍອະນຸຍາດຂຶ້ນທະບຽນ ກອງທຶນຮ່ວມລົງທຶນ ຕ້ອງແມ່ນ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ບໍລິສັດຫຼັກຊັບ.

**ມາດຕາ 15 ເງື່ອນໄຂການຂໍຂຶ້ນທະບຽນກອງທຶນຮ່ວມລົງທຶນ**

ຜູ້ທີ່ມີຈຸດປະສົງຂໍຂຶ້ນທະບຽນກອງທຶນຮ່ວມລົງທຶນ ຕ້ອງມີເງື່ອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້. ນອກຈາກນັ້ນ, ຕ້ອງມີເງື່ອນໄຂເພີ່ມເຕີມຄືດັ່ງນີ້:

1. ມີທຶນໃນກອງທຶນຮ່ວມລົງທຶນ ຢ່າງໜ້ອຍ ໜຶ່ງຮ້ອຍລ້ານກີບ;
2. ມີສັນຍາຮ່ວມກັບບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ບໍລິສັດຫຼັກຊັບ ຢູ່ ສປປ ລາວ ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດປະເພດບໍລິຫານກອງທຶນເພື່ອການລົງທຶນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ບໍລິສັດຫຼັກຊັບ ຢູ່ຕ່າງປະເທດ ທີ່ໄດ້ຮັບໃບອະນຸ ຍາດດຳເນີນທຸລະກິດປະເພດບໍລິຫານກອງທຶນເພື່ອການລົງທຶນຈາກ ອົງການຄຸ້ມຄອງວຽກງານຫຼັກຊັບຂອງ ຕ່າງປະເທດ ທີ່ມີສັນຍາຮ່ວມກັບບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ບໍລິສັດຫຼັກຊັບຢູ່ ສປປ ລາວ ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດປະເພດບໍລິຫານກອງທຶນເພື່ອການລົງທຶນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ມີແຜນການລະອຽດ ກ່ຽວກັບ ແຜນການລົງທຶນ.

**ມາດຕາ 16 ເປົ້າໝາຍການລົງທຶນຂອງກອງທຶນຮ່ວມລົງທຶນ**

ເປົ້າໝາຍການລົງທຶນຂອງກອງທຶນຮ່ວມລົງທຶນ ແມ່ນລົງທຶນໃນ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ທຸລະກິດແບບສະຕາດອັບ.

ສຳລັບ ອັດຕາສ່ວນການລົງທຶນຂອງ ກອງທຶນຮ່ວມລົງທຶນ ແມ່ນໃຫ້ປະຕິບັດຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນແຕ່ລະໄລຍະ.

**ມາດຕາ 17 ການນຳໃຊ້ບົດບັນຍັດຂອງ ກອງທຶນເພື່ອການລົງທຶນໃນບໍລິສັດ**

ຮູບແບບການສ້າງຕັ້ງ, ເອກະສານປະກອບ, ການພິຈາລະນາ, ອາຍຸການລົງທຶນ ແລະ ການໄຖຖອນການລົງທຶນຂອງ ທຸລະກິດຮ່ວມລົງທຶນ ໃຫ້ປະຕິບັດຕາມບົດບັນຍັດຂອງ ກອງທຶນເພື່ອລົງທຶນໃນບໍລິສັດຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ສັນຍາລະຫວ່າງ ຜູ້ສະເໜີຂໍຂຶ້ນທະບຽນ ກອງທຶນ ຮ່ວມກັບ ທະນາຄານດູແລຊັບສິນ, ບໍລິສັດກວດສອບ ແລະ ຜູ້ລົງທຶນໃນກອງທຶນ

**ມາດຕາ 18 ສັນຍາລະຫວ່າງຜູ້ສະເໜີຂໍຂຶ້ນທະບຽນກອງທຶນ ກັບ ທະນາຄານດູແລຊັບສິນ**

ຜູ້ສະເໜີຂໍຂຶ້ນທະບຽນກອງທຶນ ຕ້ອງມີສັນຍາຮ່ວມກັບ ທະນາຄານດູແລຊັບສິນ ຊຶ່ງເນື້ອໃນຂອງສັນຍາຕ້ອງສອດຄ່ອງກັບປະມວນກົດໝາຍແພ່ງ. ນອກຈາກນັ້ນ, ຕ້ອງປະກອບມີເນື້ອໃນເພີ່ມເຕີມ ດັ່ງນີ້:

1. ລາຍລະອຽດໂຄງການຂອງກອງທຶນເພື່ອລົງທຶນໃນບໍລິສັດ ຫຼື ກອງທຶນຮ່ວມລົງທຶນ;
2. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຜູ້ສະເໜີຂໍຂຶ້ນທະບຽນ;
3. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ທະນາຄານດູແລຊັບສິນ;
4. ຂໍ້ຈຳກັດການລົງທຶນ;
5. ວິທີການຊຳລະເງິນ ຫຼື ຊັບສິນອື່ນ;
6. ຫຼັກການ ແລະ ວິທີການ ໃນການຂໍມະຕິຂອງຜູ້ລົງທຶນ ແລະ ຜົນສັກສິດຂອງມະຕິ;
7. ການທົດແທນຄວາມເສຍຫາຍ;
8. ການຍຸບເລີກ ແລະ ການຊຳລະສະສາງ;
9. ອາຍຸການລົງທຶນຂອງກອງທຶນ;
10. ຄ່າບໍລິການ;
11. ເນື້ອໃນອື່ນ ຕາມການຕົກລົງກັນຂອງຄູ່ສັນຍາທັງສອງຝ່າຍ.

**ມາດຕາ 19 ສັນຍາລະຫວ່າງ ຜູ້ສະເໜີຂໍຂຶ້ນທະບຽນກອງທຶນ ກັບ ບໍລິສັດກວດສອບ**

ຜູ້ສະເໜີຂໍຂຶ້ນທະບຽນກອງທຶນ ຕ້ອງມີສັນຍາຮ່ວມກັບ ບໍລິສັດກວດສອບ ຊຶ່ງເນື້ອໃນຂອງສັນຍາຕ້ອງສອດຄ່ອງກັບປະມວນກົດໝາຍແພ່ງ. ນອກຈາກນັ້ນ, ຕ້ອງປະກອບມີເນື້ອໃນເພີ່ມເຕີມ ດັ່ງນີ້:

1. ລາຍລະອຽດຂອງການກວດສອບ;
2. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຜູ້ສະເໜີຂໍຂຶ້ນທະບຽນ;
3. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ບໍລິສັດກວດສອບ;
4. ຄ່າບໍລິການ;
5. ເນື້ອໃນອື່ນ ຕາມການຕົກລົງກັນຂອງຄູ່ສັນຍາທັງສອງຝ່າຍ.

**ມາດຕາ 20 ສັນຍາລະຫວ່າງ ຜູ້ສະເໜີຂໍຂຶ້ນທະບຽນກອງທຶນ ກັບ ຜູ້ລົງທຶນໃນກອງທຶນ**

ຜູ້ສະເໜີຂໍຂຶ້ນທະບຽນ ກອງທຶນ ຕ້ອງມີສັນຍາຮ່ວມກັບ ຜູ້ລົງທຶນໃນກອງທຶນ ຊຶ່ງເນື້ອໃນຂອງສັນຍາຕ້ອງສອດຄ່ອງກັບປະ ມວນກົດໝາຍແພ່ງ. ນອກຈາກນັ້ນ, ຕ້ອງປະກອບມີເນື້ອໃນເພີ່ມເຕີມ ດັ່ງນີ້:

1. ຊື່, ສະຖານທີ່ຕັ້ງຂອງ ສໍານັກງານໃຫຍ່ ແລະ ສາຂາທັງໝົດ ຂອງຜູ້ສະເໜີຂໍຂຶ້ນທະບຽນ;
2. ຈຸດປະສົງ ແລະ ນະໂຍບາຍການລົງທຶນ;
3. ປະເພດ ແລະ ອາຍຸ ຂອງກອງທຶນ;
4. ຈໍານວນ ແລະ ມູນຄ່າກໍານົດ;
5. ວິທີການຄຸ້ມຄອງບໍລິຫານ;
6. ວິທີຄິດໄລ່ມູນຄ່າຊັບສິນສຸດທິ;
7. ວິທີການແບ່ງປັນຜົນກໍາໄລ ຫຼື ເງິນປັນຜົນ;
8. ຄ່າບໍລິການ ທີ່ຕ້ອງຈ່າຍ;
9. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ;
10. ການຍຸບເລີກ ແລະ ການຊໍາລະສະສາງ;
11. ຂໍ້ຈໍາກັດການລົງທຶນ;
12. ຂໍ້ຈໍາກັດໃນການຈ່າຍເງິນປັນຜົນ (ຖ້າມີ);
13. ວິທີການຊໍາລະເງິນ ຫຼື ຊັບສິນອື່ນ;
14. ການທົດແທນຄວາມເສຍຫາຍ;
15. ເນື້ອໃນອື່ນ ຕາມການຕົກລົງກັນຂອງຄູ່ສັນຍາທັງສອງຝ່າຍ.

## ໝວດທີ 5
## ສິດ ແລະ ໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 21 ສິດ ແລະ ໜ້າທີ່ຂອງ ຜູ້ສະເໜີຂໍຂຶ້ນທະບຽນກອງທຶນ**

ຜູ້ສະເໜີຂໍຂຶ້ນທະບຽນກອງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນທຸລະກິດ, ຄຸ້ມຄອງ ແລະ ບໍລິຫານການລົງທຶນເຂົ້າໃນເປົ້າໝາຍການລົງທຶນທີ່ລະບຽບການກໍານົດໄວ້;

2. ລາຍງານການ ແຕ່ງຕັ້ງ, ປົດຕໍາແໜ່ງ ຫຼື ຍົກຍ້າຍ ຜູ້ບໍລິຫານກອງທຶນ ແລະ ພະນັກງານທີ່ຖືກແຕ່ງຕັ້ງໃນການດໍາເນີນງານທີ່ກ່ຽວຂ້ອງກັບກອງທຶນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນກໍານົດເວລາ 5 ວັນລັດຖະການ ນັບແຕ່ວັນທີ່ມີການ ແຕ່ງຕັ້ງ, ປົດຕໍາແໜ່ງ ຫຼື ຍົກຍ້າຍ ເປັນຕົ້ນໄປ;

3. ລາຍງານ ການເຄື່ອນໄຫວວຽກງານເປັນປະຈໍາ ເດືອນ, ໄຕມາດ ແລະ ປີ ແລະ ຕາມການຮຽກຮ້ອງຂອງ ສຄຄຊ ແລະ ສໍານັກງານຂໍ້ມູນຕ້ານການຟອກເງິນ;

4. ແຍກຊັບສິນຂອງກອງທຶນ ອອກຈາກກັນ ແລະ ແຍກອອກຈາກຊັບສິນຂອງບໍລິສັດ;

5. ຄຸ້ມຄອງຊັບສິນຂອງກອງທຶນ ຊຶ່ງຖືວ່າເປັນຊັບສິນຂອງຜູ້ລົງທຶນໃນກອງທຶນ;

6. ເປີດເຜີຍຂໍ້ມູນກ່ຽວກັບ ນະໂຍບາຍການລົງທຶນ, ຄວາມສ່ຽງ, ຜົນຕອບແທນ ແລະ ຂໍ້ມູນອື່ນ ໃຫ້ຜູ້ລົງທຶນໃນກອງທຶນຊາບ ເພື່ອເປັນຂໍ້ມູນໃນການຕັດສິນໃຈຮ່ວມທຶນ;

7. ເຄື່ອນໄຫວວຽກງານຕາມລະບອບປະຊຸມ;

8. ເຄື່ອນໄຫວວຽກງານໃຫ້ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງ ຜູ້ບໍລິຫານກອງທຶນ**

ຜູ້ບໍລິຫານກອງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດຈຸດປະສົງ ແລະ ນະໂຍບາຍການລົງທຶນ ຕາມການເຫັນດີຂອງຜູ້ສະເໜີຂໍ້ສ້າງຕັ້ງ;
2. ບໍລິຫານກອງທຶນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ;
3. ໃຫ້ຄວາມຮູ້ພື້ນຖານດ້ານລົງທຶນໃນຫຼັກຊັບ ແກ່ຜູ້ສະເໜີຂໍສ້າງຕັ້ງ ແລະ ຜູ້ລົງທຶນຮ່ວມສ້າງຕັ້ງ;
4. ຕິດຕາມການດໍາເນີນງານຂອງວິສາຫະກິດເປົ້າໝາຍ;
5. ລາຍງານການເຄື່ອນໄຫວວຽກງານຂອງກອງທຶນຕໍ່ ຜູ້ສະເໜີຂໍສ້າງຕັ້ງ ແລະ ຜູ້ລົງທຶນຮ່ວມສ້າງຕັ້ງ ທີ່ຕົນສັງກັດຢູ່.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງ ທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 89 ແລະ ຂໍ້ຕົກລົງວ່າດ້ວຍການຮັບຮອງເປັນທະນາຄານດູແລຊັບສິນ. ນອກຈາກນັ້ນ, ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ຄຸ້ມຄອງບັນຊີເງິນ ແລະ ບັນຊີໜ່ວຍລົງທຶນ;
2. ເກັບຮັກສາຊັບສິນຂອງກອງທຶນ;
3. ຈ່າຍເງິນປັນຜົນ ແລະ ຄ່າໃຊ້ຈ່າຍອື່ນໆ;
4. ຕິດຕາມຜົນປະໂຫຍດຈາກການລົງທຶນ;
5. ຕິດຕາມ ແລະ ກວດກາ ການບໍລິຫານ ຂອງຜູ້ບໍລິຫານກອງທຶນ;
6. ສ້າງກົນໄກໃນການ ຕິດຕາມ ກວດກາ ຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດທີ່ອາດເກີດຂຶ້ນ;
7. ປະຕິບັດລະບອບການລາຍງານ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການຮັບຮອງເປັນທະນາຄານດູແລຊັບສິນ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງ ບໍລິສັດກວດສອບ**

ບໍລິສັດກວດສອບ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 96. ນອກຈາກນັ້ນ, ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ປະຕິບັດຫຼັກການ ແລະ ມາດຕະຖານການບັນຊີ ຂອງເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍ ການບັນຊີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ປະຕິບັດລະບອບການລາຍງານ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການຮັບຮອງບໍລິສັດກວດສອບ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງ ຜູ້ລົງທຶນໃນກອງທຶນ**

ຜູ້ລົງທຶນໃນກອງທຶນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດຈຸດປະສົງ ແລະ ນະໂຍບາຍການລົງທຶນ ຮ່ວມກັບ ຜູ້ສະເໜີຂໍຂຶ້ນທະບຽນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ;
2. ໄດ້ຮັບເງິນປັນຜົນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ;
3. ຮັບຮູ້ການດໍາເນີນງານຂອງກອງທຶນເປັນປະຈໍາ ເດືອນ ແລະ ໄຕມາດ;

4. ສະເໜີປົດຕຳແໜ່ງຜູ້ບໍລິຫານກອງທຶນ ກໍລະນີຜູ້ບໍລິຫານກອງທຶນບໍ່ປະຕິບັດຕາມສັນຍາ;

5. ປະຕິບັດພັນທະຕໍ່ ຜູ້ສະເໜີຂໍສ້າງຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

## ໝວດທີ 6
## ຂໍ້ຫ້າມ ແລະ ຄ່າບໍລິການ

### ມາດຕາ 26 ຂໍ້ຫ້າມ

ຫ້າມ ຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ, ຜູ້ລົງທຶນໃນກອງທຶນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ ແລະ ຜູ້ບໍລິຫານກອງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານກອງທຶນຢູ່ ສປປ ລາວ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ເຄື່ອນໄຫວບໍ່ເປັນໄປຕາມທີ່ໄດ້ກຳນົດໄວ້ໃນສັນຍາ ເວັ້ນເສຍແຕ່ມີມະຕິຮັບຮອງຈາກກອງປະຊຸມຜູ້ລົງທຶນ;

2. ນຳໃຊ້ທະນາຄານດູແລຊັບສິນ ແລະ ບໍລິສັດກວດສອບ ທີ່ເປັນບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດ ກັບຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ ເວັ້ນເສຍແຕ່ໄດ້ຮັບການເຫັນດີຈາກຜູ້ລົງທຶນ;

3. ດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນຂອງກອງທຶນບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໃນສັນຍາ;

4. ຍັກຍອກ ຫຼື ສໍ້ໂກງ ເງິນ ຫຼື ຫຼັກຊັບ ຂອງລູກຄ້າ;

5. ຍັກຍອກ ຫຼື ສໍ້ໂກງ ເງິນ ຫຼື ຫຼັກຊັບ ຂອງ ບໍລິສັດ ຫຼື ກອງທຶນ;

6. ຈົດກ່າຍບັນຊີ ຫຼື ກວດສອບເອກະສານລາຍງານການເງິນ ບໍ່ຖືກຕ້ອງຕາມຄວາມເປັນຈິງ;

7. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດຈາກລູກຄ້າ ໃຫ້ແກ່ ຕົນເອງ ຫຼື ບຸກຄົນອື່ນ;

8. ສ້າງ, ສະໜອງ, ເຊື່ອງອຳ ຫຼື ປອມແປງ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງບໍ່ຖືກຕ້ອງຕາມຄວາມເປັນຈິງ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 27 ຄ່າບໍລິການ

ຜູ້ທີ່ມີຈຸດປະສົງຂຶ້ນທະບຽນກອງທຶນຕ້ອງເສຍຄ່າບໍລິການໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີດັ່ງນີ້:

1. ຄ່າຍື່ນເອກະສານຂໍຂຶ້ນທະບຽນກອງທຶນ ຈຳນວນ 1.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ຄ່າໃບອະນຸຍາດຂຶ້ນທະບຽນກອງທຶນຈຳນວນ ສູນຈຸດສູນສູນສອງສ່ວນຮ້ອຍ (0,002%) ຂອງມູນຄ່າການຈຳໜ່າຍໜ່ວຍລົງທຶນຂອງກອງທຶນເພື່ອການລົງທຶນໃນບໍລິສັດ ຫຼື ຕ່ຳສຸດບໍ່ຫຼຸດ 2.000.000 ກີບ ແລະ ສູງສຸດ ບໍ່ເກີນ 20.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບທະບຽນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ, ຜູ້ລົງທຶນໃນກອງທຶນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ຜູ້ບໍລິຫານກອງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານກອງທຶນເພື່ອການລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ

ຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ, ຜູ້ລົງທຶນໃນກອງທຶນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ຜູ້ບໍລິຫານກອງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານກອງທຶນເພື່ອການລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ;
2. ມາດຕະການປັບໃໝ;
3. ມາດຕະການເພີ່ມເຕີມ.

### ມາດຕາ 30 ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ

ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນປະຕິບັດໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການ ລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ລາຍງານການປ່ຽນແປງຂອງ ຜູ້ບໍລິຫານກອງທຶນ, ບໍ່ໃຫ້ການຮ່ວມມືກັບພາກສ່ວນກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;
3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຂອງຂໍ້ຕົກລົງສະບັບນີ້;
4. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 31 ມາດຕະການປັບໃໝ

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ເຄີຍຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ;

2. ເຄື່ອນໄຫວທຸລະກິດກ່ອນໄດ້ຮັບອະນຸຍາດ ຫຼື ຂຶ້ນທະບຽນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ;

3. ເຄື່ອນໄຫວບໍ່ເປັນໄປຕາມທີ່ກຳນົດໄວ້ໃນ ສັນຍາ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ ເວັ້ນເສຍແຕ່ມີມະຕິຮັບຮອງຈາກກອງປະຊຸມຜູ້ລົງທຶນ;

4. ນຳໃຊ້ທະນາຄານດູແລຊັບສິນ ແລະ ບໍລິສັດກວດສອບ ທີ່ເປັນບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດ ກັບ ຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ ໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ລົງທຶນ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ;

5. ດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນຂອງ ກອງທຶນເພື່ອການລົງທຶນໃນບໍລິສັດ ຫຼື ທຸລະກິດຮ່ວມລົງທຶນ ບໍ່ຖືກຕ້ອງຕາມທີ່ກຳນົດໃນສັນຍາ ກໍລະນີບໍ່ມີມະຕິຂອງກອງປະຊຸມຜູ້ລົງທຶນ ຫຼື ບໍ່ມີການກຳນົດໄວ້ໃນສັນຍາທີ່ກ່ຽວຂ້ອງ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ;

6. ຍັກຍອກ ຫຼື ສໍ້ໂກງ ເງິນ ຫຼື ຫຼັກຊັບ ຂອງລູກຄ້າ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າທີ່ຍັກຍອກ ຫຼື ສໍ້ໂກງ ຫຼື ຈະຖືກປັບໃໝປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ;

7. ຈົດກ່າຍບັນຊີ ຫຼື ກວດສອບເອກະສານລາຍງານການເງິນ ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ;

8. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດຈາກລູກຄ້າ ໃຫ້ແກ່ ຕົນເອງ ຫຼື ບຸກຄົນອື່ນ ຈະຖືກປັບໃໝ 3 ເທົ່າຂອງມູນຄ່າຄວາມເສຍຫາຍ. ກໍລະນີບໍ່ມີຄວາມເສຍຫາຍ ຈະຖືກປັບໃໝແຕ່ 25.000.000 ກີບ ຫາ 50.000.000 ກີບ;

9. ສ້າງ, ສະໜອງ, ເຊື່ອງອຳ ຫຼື ປອມແປງ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າຄວາມເສຍຫາຍ ຫຼື ຈະຖືກປັບໃໝປັບໃໝ ແຕ່ 25.000.000 ກີບ ຫາ 50.000.000 ກີບ.

### ມາດຕາ 32 ມາດຕະການເພີ່ມເຕີມ

ມາດຕະການເພີ່ມເຕີມ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

2. ຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ໃບທະບຽນ;

3. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

# ໝວດທີ 8
# ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ໄດ້ຮັບການຂຶ້ນທະບຽນກອງທຶນ, ຜູ້ລົງທຶນໃນກອງທຶນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ຜູ້ບໍລິຫານກອງທຶນ ແລະ ພາກສ່ວນອື່ນ ທີ່ເຄື່ອນໄຫວວຽກງານກອງທຶນເພື່ອການລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

**ວັດທະນາ ດາລາລອຍ**